# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 6 ພຶສພາ 2018 ( 5-6-2018 )

## ຖອນຕົວລົງມາ

*ມີໃຜແດ່ທີ່ເປັນວິຣະສະຕຣີທີ່ທ່ານຊື່ນຊອບທີ່ສຸດ ?*

**ຈຸດສຳຄັນໃນບົດຮຽນ**: ການຍອມໃຫ້ພຣະເຈົ້ານຳພາສູ່ສິ່ງຍິ່ງໃຫຍ່ກວ່າ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ພວກເຮົາມັກຄຸ້ນເຄີຍກັບວີຣະກັມ(Heroism)ໃນດ້ານ ຄວາມຍິ່ງໃຫຍ່ ແລະກຽດຕິຍົດ. ຜົນງານເຫຼົ່ານີ້ລ້ວນແຕ່ໄດ້ມາດ້ວຍການສ່ຽງຕໍ່ພັຍອັນຕະລາຍຢ່າງໃຫຍ່ຫຼວງສເມີ ວີຣະກັມຂອງວີຣະຊົນທີ່ເກີດຂຶ້ນ ພາບພາຍນອກເບິ່ງເໝືອນເປັນພຽງພາບນ້ອຍໆ ແຕ່ແນ່ນອນສິ່ງເຫຼົ່ານັ້ນໄດ້ເຮັດໃຫ້ເຂົາກາຍເປັນໃຫຍ່ເປັນໂຕ ແລະໄດ້ຮັບກຽດຕິຍົດບໍ່ໄດ້ໜ້ອຍ.

ການຮັບໜ້າທີ່ວີຣະຊົນກ່ຽວກັບ ຄນະຜູ້ແທນສານຍຸຕິທັມນາໆຊາດ(ຄສນ) International Justice Mission (IJM). ເປົ້າໝາຍຂອງເຂົາແມ່ນ ກູ້ພັຍເດັກຊາຍ ແລະເດັກຍິງທີ່ຕົກເປັນທາດການຄ້າມະນຸດ. ພວກເຂົາໃຊ້ທະນາຍຫຼາຍພັນຄົນທຳໜ້າທີ່ໃນພູມີພາກຕ່າງໆຂອງໂລກຊຶ່ງເປັນເຂດອັນຕະລາຍຫຼາຍ ເພື່ອສືບສາວຊ່ອຍກູ້ເອົາເດັກທີ່ຕົກຢູ່ໃນສະພາບທາດ ຈາກເງື້ອມມືເຈົ້ານາຍຂອງເຂົາ.ແຕ່ກ່ອນທີ່ເຂົາຈະຈັບໂທຣະສັບຂຶ້ນມາໂທ, ຂຽນຂໍ້ມູນດ້ານກົດໝາຍສັ້ນໆ, ຫຼືຂີ່ຣົດໄປນຳຕຳຣວດທ້ອງຖິ່ນເພື່ອຈັບກຸມພວກຄ້າມະນຸດ, ເຂົາຕ້ອງໄດ້ອະທິຖານກ່ອນ. (ຄສນ) ຍັງໄດ້ນຳເອົາພະນັກງານ ເຂົ້າຟື້ນຟູຈິດວິນຍານ ປີລະສີ່ຄັ້ງແລະເຂົ້າຮ່ວມຊຸມນຸມຢູ່ວໍຊິງຕັນ, ດີຊີ, ເພື່ອຮ່ວມກຸ່ມອະທິຖານຣະດັບໂລກອີກດ້ວຍ.

ແມ່ນວ່າມີວຽກທີ່ຕ້ອງເຮັດຢ່າງຫຼວງຫຼາຍປານນັ້ນ, ເປັນຫຍັງເຂົາບໍ່ໂດດເຂົ້າໂຈມຕີໂລດ? (ຄສນ) ຮູ້ວ່າ ການພິພາກສາທາງພຣະຄັມພີບໍ່ໄດ້ເລີ່ມຕົ້ນດ້ວຍການກະທຳ ຫຼືຄຳເວົ້າ, ແຕ່ເລີ່ມຕົ້ນດ້ວຍການອ້ອນວອນ ແລະການນະມັສການ ຕໍ່ພຣະພັກ ພຣະເຈົ້າ. ຄົນທົ່ວໄປມອງເຫັນເອສະເທີ ວ່າເປັນວີຣະສະຕຣີຜູ້ຍິ່ງໃຫຍ່ຜູ້ນຶ່ງໃນພຣະຄັມພີ. ແລະນາງກໍເປັນດັ່ງນັ້ນແທ້ ແຕ່ກ່ອນທີ່ນາງ ແລະມໍເດກາຍຈະກ້າວເຂົ້າສູ່ຊ່ວງເວລາພິພາກສາທີ່ສ່ຽງພັຍ, ເປັນອັນຕະຣາຍຕໍ່ຊີວິດ, ເຂົາໄດ້ກະທຳບາງສິ່ງທີ່ເປັນວີຣະກັມ. ພວກເຂົາສແວງຫາພຣະເຈົ້າໃນການອະທິຖານ.

**ພຣະຄັມພີກ່າວວ່າຢ່າງໃດ**: ( ເບິ່ງຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ເອສະເທີ 4:1-3</u>** :

*1 ເມື່ອ ມໍເດກາຍໄດ້ຍິນທຸກຢ່າງທີ່ໄດ້ປະກາດໄປແລ້ວນັ້ນ ມໍເດກາຍກໍຈີກເສື້ອຂອງຕົນ ນຸ່ງຜ້າກະສອບເຂົ້າ ແລະເອົາຂີ້ເຖົ່າໂຮຍໃສ່ຫົວແລ້ວຍ່າງຜ່ານເມືອງໄປ ຮ້ອງຄາງດ້ວຍສຽງດັງຢ່າງຂົມຂື່ນ 2 ເພິ່ນຂຶ້ນໄປຢູ່ຕໍ່ໜ້າປະຕູຂອງກະສັດ ເພາະບໍ່ມີຜູ້ໃດ ທີ່ນຸ່ງຜ້າກະສອບ ເຂົ້າປະຕູຂອງກະສັດໄດ້ 3 ແລະໃນທຸກແຂວງທີ່ຄຳສັ່ງຂອງກະສັດ ແລະດຳຣັດຂອງເພິ່ນໄປເຖິງ ກໍມີການໄຫວ້ທຸກ ຢ່າງໃຫຍ່ຫຼວງທ່າມກາງພວກຢິວ ດ້ວຍການອົດອາຫານ ຮ້ອງໄຫ້ ແລະຮ້ອງຄາງ ຄົນເປັນຈຳນວນຫຼາຍໄດ້ນຸ່ງຜ້າກະ ສອບ ແລະນອນກິ້ງເກືອກຂີ້ເຖົ່າ.*

ກະສັດຈຶ່ງຖອດແຫວນກາອອກຈາກພຣະຫັດຂອງພຣະອົງມອບແກ່ຮາມານ ລູກຊາຍຮຳເມດາທາຄົນອັກອາກ ສັດຕຣູຂອງຊາວຢິວ ແລະກະສັດກ່າວກັບຮາມານວ່າ "ເຮົາມອບເງິນນັ້ນໃຫ້ແກ່ທ່ານ ແລະມອບປະຊາຊົນໃຫ້ແກ່ທ່ານ ດ້ວຍເພື່ອຈະ ເຮັດແກ່ພວກເຂົາຕາມທີ່ທ່ານເຫັນດີ, (ເບິ່ງ 4:10-11). ພຣະຣາຊດຳຣັດໄດ້ປະກາດອອກໄປທົ່ວເຂດ ເປີເຊັຍ, ໃຫ້ລົງໂທດຊາວຢິວທຸກຄົນເພື່ອທຳລາຍລ້າງໃນວັນດຽວ. ນີ້ແມ່ນ, ດ້ວຍຄຳກ່າວຫາທຸກຢ່າງ, ການຕັດສິນໃຈ ທີ່ປ່ຽນແປງບໍ່ໄດ້ ຊຶ່ງຈະເປັນຜົນກະທົບຕໍ່ຜູ້ບໍຣິສຸດຫຼາຍພັນຄົນ. ມັນແມ່ນກົດໝາຍທີ່ບໍ່ຍຸດຕິທັມເລີຍ. ເມື່ອມໍເດກາຍ ຊາບເຣື່ອງພຣະດຳຣັດທຸກຢ່າງ, ສິ່ງແລກທີ່ເພິ່ນຕອບໂຕ້ແມ່ນການຮ້ອງຄາງດ້ວຍສຽງດັງຢ່າງຂົມຂື່ນ. ພາສາເຮັບເຣີ ດັ້ງເດີມບັລຍາຍການຮ້ອງຄວນຄາງຂອງ ມໍເດກາຍວ່າເປັນສຽງຄວນຄາງທີ່ໜັກໜ່ວງ ແລະພຶມພຳ.ສ່ວນປະກອບການ ໄວ້ທຸກຂອງເພິ່ນໄດ້ແກ່, ມໍເດກາຍໄດ້ຈີກເສື້ອຜ້າ, ນຸ່ງໄຖ່ປ່ານ ແລະໂຮຍຂີ້ເຖົ່າຕາມຕົວ. ໃນສມັຍບູຮານພາກຕາເວັນ ອອກແລ້ວ, ນີ້ແມ່ນການປະຕິບັດໂດຍປົກຕິສຳລັບການໄວ້ທຸກ. ຕລອດພຣະຄັມພີ, ເມື່ອບຸກຄົນ ຫຼືກຸ່ມໄວ້ທຸກສິ່ງສຽງ ຮ້ອງຄວນຄາງດ້ວຍຄວາມເສັ່ງໃຈຢ່າງແຮງຈະຂຶ້ນໄປຮອດພຣະເຈົ້າ. ພວກເຮົາສາມາດສລຸບຢ່າງມີເຫດຜົນວ່າການ ກະທຳຂອງມໍເດກາຍສະທ້ອນໃຫ້ເຫັນເຖິງການຮ້ອງທຸກຕໍ່ພຣະເຈົ້າ.

ຄວາມທຸກໂສກຂອງເພິ່ນຊຶມຊ່ວນເຂົ້າສູ່ຫົວໃຈ ແລະຈິດວິນຍານຂອງເພິ່ນຢ່າງໜັກ. ຄວາມເສົ້າໂສກຂອງມໍ ເດກາຍ ຮ້າຍແຮງ, ຍັບຍັ້ງການທຳງານຕາມໜ້າທີ່ຂອງເພິ່ນຢູ່ຂ້າງໃນປະຕູໂຂງຂອງພຣະຣາຊາ; ຊຶ່ງອາດເປັນການ ລະເມີດຕໍ່ມາຣະຍາດຂອງວັງຫຼວງ. ການໄວ້ທຸກ ແລະການນຸ່ງຖືຂອງເພິ່ນເປັນທີ່ຮັບຊາບແລ້ວ, ແລະຄຳເວົ້າການສະ ແດງອອກຂອງເພິ່ນກໍໄປເຖິງພຣະຣາຊິນີແລ້ວ (ເບິ່ງ 4:4).

ບໍ່ແມ່ນມໍເດກາຍພຽງຄົນດຽວທີ່ຕົກຢູ່ໃນຄວາມທຸກໂສກ. ພົລເມືອງຢິວທົ່ວອານາຈັກເປີເຊັຍກໍໄດ້ຮັບຂ່າວ ແລະ ໄດ້ຮ້ອງ ໄຫ້ຄ່ຳຄວນນຳຊາຕາກັມຂອງເຂົາ. ແນ່ນອນ ການສະແດງອອກໃນສາທາຣະນະ ການຮ້ອງໄຫ້, ການອົດອາ ຫານ, ແລະການນຸ່ງໄຖ່ປ່ານ ແລະການໂຮຍຂີ້ເຖົ່າຕາມຕົນຕົວຂອງພວກເຂົາຄົງກະທົບກະເທືອນຕໍ່ຊີວິດປະຈຳວັນທົ່ວ ອານາຈັກແນ່ໆ. ພວກເຮົາພຽງແຕ່ອາດປລາດໃຈວ່າຄົນອື່ນຈະເບິ່ງເຫັນພາບການປະພຶດນີ້ຢ່າງໃດ. ເຂົາຈະສະເທືອນ ໃຈນຳເຄາະກັມທີ່ຈະມາເຖິງເພື່ອນບ້ານຂອງເຂົາຫຼືບໍ່? ມີຈັກຄົນຮ້ອງໄຫ້ນຳຊາວຢິວຫຼືບໍ່?

ການຄ່ຳຄວນ ຮ້ອງຫາພຣະເຈົ້າໃນຄວາມເສັ່ງໃຈເລິກໆ ຄວນເປັນພາກສ່ວນສຳຄັນຂອງການຕອບໂຕ້ຂອງເຮົາ ເອງ ຕໍ່ຄວາມບໍ່ຍຸດຕິທັມ. ການສະແດງອອກຊຶ່ງຄວາມທຸກໂສກບໍ່ແມ່ນຄວາມເຊື່ອບໍ່ມີຝ່າຍວິນຍານ ແລະບໍ່ແມ່ນການ ສະທ້ອນເຖິງການຂາດຄວາມເຊື່ອເລີຍ. ຫ່າງໄກກັນຫຼາຍ ! ພວກຜູ້ທຳນວາຍດັ່ງເຢເຣມີຢາ ແລະຮາບາກຸກກໍໄດ້ຮ້ອງ ໄຫ້ຄ່ຳຄວນນຳອານາ ຈັກຝ່າຍວິນຍານຂອງອິສຣາແອນ ແລະພຣະເຢຊູກໍໄດ້ຊົງພຣະກັນແສງນຳນະຄອນເຢຣູຊາເລັມ (ເບິ່ງ ລູກາ 19:41-44).

ພຣະເຈົ້າເອີ້ນເຮົາໃຫ້ກ້າວເຂົ້າສູ່ປະສົບການຂອງຜູ້ທີ່ທົນທຸກ ແລະຮ້ອງໄຫ້ກັບຜູ້ຮ້ອງໄຫ້. ຖ້າພວກເຮົາບໍ່ເຫັນ ຄວາມບໍ່ເປັນທັມ, ພວກເຮົາຈະບໍ່ທຸກໂສກຕໍ່ສິ່ງນັ້ນ, ແລະຖ້າເຮົາບໍ່ໂສກເສົ້ານຳຄວາມບໍ່ເປັນທັມແລ້ວ, ພວກເຮົາກໍຈະ ບໍ່ມີທ່າທີຫຍັງຕໍ່ມັນ. ພວກເຮົາອ້ອນວອນໃຫ້ພຣະເຈົ້າເປີດຕາເຮົາໃຫ້ເຫັນຄວາມເຈັບປວດ ເພື່ອພວກເຮົາຈະເປັນທຸກ ໂສກ, ອ້ອນວອນ ແລະ ມີການກະທຳ. ເມື່ອເຮົາເຮັດດັ່ງນີ້ແມ່ນພວກເຮົາສະແດງໃຫ້ໂລກເຫັນພາບປາກົດຂອງພຣະ ຜູ້ໂຜດໃຫ້ພົ້ນຂອງເຮົາ, ຜູ້ຊຶ່ງໄດ້ເຂົ້າຮ່ວມໃນຄວາມບໍ່ຍຸດຕິທັມຂອງເຮົາ ຜູ້ຮ້ອງໄຫ້ກັບເຮົາໃນຄວາມທຸກທໍຣະມານ ຂອງເຮົາແລະຜູ້ຊຶ່ງໄດ້ຊົງຮັບທຸກແທນເຮົາ.

| |
|---|
| ***ດົນປານໃດແລ້ວທີ່ເປັນຄັ້ງສຸດທ້າຍທີ່ທ່ານຕົກຢູ່ໃນຄວາມທຸກໂສກຕໍ່ຄວາມບໍ່ຍຸດຕິທັມ? ( ຈົ່ງຍົກຕົວຢ່າງ ).*** |

## 2. ເອສະເທີ 4:10-14:

*[10]ແລ້ວພຣະນາງເອສະເທີ ກໍບອກຮາທາກ ໃຫ້ສົ່ງຂ່າວໄປໃຫ້ມໍເດກາຍວ່າ [11]"ຂ້າຣາຊການຂອງກະສັດທັງໝົດ ແລະ*

*ປະຊາ ຊົນໃນບັນດາແຂວງຂອງກະສັດຮູ້ຢູ່ວ່າ "ຖ້າຊາຍ ຫຼືຍິງຄົນໃດເຂົ້າເຝົ້າກະສັດພາຍໃນພຣະລານຊັ້ນໃນໂດຍບໍ່ໄດ້ເອີ້ນນັ້ນ ມີກົດໝາຍຢູ່ຂໍ້ດຽວຊຶ່ງຄືກັນໝົດຄື:ລົງໂທດເຖິງຕາຍ ເວັ້ນໄວ້ແຕ່ຜູ້ຊຶ່ງກະສັດຍື່ນໄມ້ເທົ້າຄຳອອກຮັບ ຄົນນັ້ນຈຶ່ງຈະມີຊີວິດຢູ່ໄດ້ ສ່ວນຂ້ອຍ ກະສັດກໍບໍ່ໄດ້ກ່າວເອີ້ນໃຫ້ເຂົ້າເຝົ້າມາສາມສິບມື້ແລ້ວ" [12]ແລະພວກເຂົາກໍມາບອກມໍເດກາຍເຖິງສິ່ງທີ່ພຣະນາງເອສະເທີໄດ້ກ່າວນັ້ນ [13]ມໍເດກາຍຈຶ່ງບອກພວກເຂົາໃຫ້ກັບໄປທູນຕອບພຣະນາງເອສະເທີວ່າ "ຢ່າຊູ່ຄິດວ່ານາງຢູ່ໃນຣາຊວັງຈະລອດພົ້ນໄດ້ດີກວ່າພວກຢິວທັງປວງ [14]ເພາະຖ້ານາງງຽບຢູ່ໃນເວລານີ້ ຄວາມຊ່ວຍເຫຼືອ ແລະການຊ່ວຍໃຫ້ພົ້ນຈະມາເຖິງພວກຢິວຈາກບ່ອນອື່ນ ແຕ່ນາງແລະເຊື້ອສາຍພໍ່ຂອງນາງຈະຈິບຫາຍ, ທີ່ຈິງນາງມາຮັບຕຳແໜ່ງຣາຊິນີກໍເພື່ອຍາມຫຍຸ້ງຍາກເຊັ່ນນີ້ອາດເປັນໄດ້ ໃຜຈະຮູ້."*

ການຮ້ອງໄຫ້ຂອງມໍເດກາຍ ຕໍ່ສູ້ຄວາມບໍ່ຍຸດຕິທັມທີ່ເປັນພັຍຄຸກຄາມຕໍ່ຊາວຢິວທີ່ຈວນຈະເກີດຂຶ້ນຍັງບໍ່ມີໃຜໄດ້ຍິນ. ມໍເດກາຍ ໄດ້ສົ່ງສຳເນົາຄຳສັ່ງຂອງຮາມານນຳຄົນໃຊ້ຂອງເອສະເທີ ເພື່ອເພິ່ນຈະສາມາດອະທິບາຍເຫດການໃຫ້ພຣະນາງຟັງແລະບອກພຣະນາງໄປອ້ອນວອນຕໍ່ກະສັດຕາງປະຊົນຊາວຢິວ. ຫຼັງຈາກໄດ້ເຫັນຄຳສັ່ງແລ້ວ, ເອສະເທີ ກໍໄດ້ສົ່ງຄົນໃຊ້ໄປອະທິບາຍໃຫ້ມໍເດກາຍເຂົ້າໃຈວ່າ, ເຖິງແມ່ນພຣະນາງຈະເປັນພຣະຣາຊິນີກໍຕາມ, ອຳນາດໃນການປະພຶດກະທຳກໍມີຂອບເຂດຈຳກັດ. ນີ້ແມ່ນອານາຈັກຂອງກະສັດເຊເຊັດ, ແລະພຣະອົງກໍມີສິດອຳນາດເຕັມ.

ເອສະເທີ ອາດຈະຕາຍຖ້າພຣະນາງໄປຢູ່ຕໍ່ໜ້າກະສັດ, ແຕ່ມໍເດກາຍຢາກໃຫ້ເອສະເທີເຂົ້າໃຈຄວາມຈິງເຖິງສິ່ງທີ່ຈະເກີດຂຶ້ນກັບຊາວຢິວ ປະຊາຊົນຂອງພຣະນາງ. ຖ້າງຽບຕໍ່ການປະເຊີນໜ້າກັບຄວາມບໍ່ຍຸດຕິທັມນີ້ ອາດຈະບໍ່ເປັນຜົນພຽງພໍທີ່ຈະຮັກສາຊີວິດຂອງເອສະເທີໄວ້ໄດ້. ຖ້າຄຳສັ່ງທຳລາຍລ້າງຂອງຮາມານເກີດຂຶ້ນ, ຊາດກຳເນີດຂອງເອສະເທີກໍຈະຖືກຄົ້ນພົບແລະພຣະນາງກໍຈະບໍ່ລອດ.

ມໍເດກາຍ ມ້ວນທ້າຍດ້ວຍຄຳອຸທອນທີ່ແຂງແຮງ ໂດຍອ້າງເຖິງການຈັດແຈງຂອງພຣະເຈົ້າວ່າ: "ທີ່ຈິງ ນາງມາຮັບຕຳ ແໜ່ງຣາຊິນີກໍເພື່ອຍາມຫຍຸ້ງຍາກເຊັ່ນນີ້ອາດເປັນໄດ້ໃຜຈະຮູ້." ຂໍ້ຄວາມດຽວທີ່ນີ້ໄດ້ເຕືອນຄວາມຊົງຈຳເອສະເທີວ່າ ມັນບໍ່ເປັນເໝືອນດັ່ງທີ່ພຣະນາງຄິດ ແລະໃຫ້ສຳນຶກວ່າພຣະນາງມີພລັງອຳນາດຢູ່ໃນກຳມືຂອງນາງ.

ພວກເຮົາແຕ່ລະຄົນຕ້ອງໄດ້ມີການເລືອກວ່າຈະ "ຍຶດເອົາວັນນຶ່ງ" ສຳລັບພຣະເຈົ້າຫຼືບໍ່? ເອສະເທີຫາກໍໄດ້ມີການຕັດສິນໃຈທີ່ສຳຄັນຢ່າງຍິ່ງນີ້. ທຸກສິ່ງທີ່ພຣະນາງປະສົບມາໃນຊີວິດຂອງນາງ ກໍອາດຈະລົງມາສູ່ການຕັດສິນໃຈທີ່ສຳຄັນຄັ້ງດຽວນີ້. ຖ້າມີໃນໝູ່ເຮົາ ພຽງສ່ວນນ້ອຍ, ຈະປະເຊີນການຕັດສິນໃຈດັ່ງທີ່ເອສະເທີປະສົບມາ, ແຕ່ວ່າພວກເຮົາຖືກເອີ້ນໃຫ້ເສັຽສລະຊີວິດຂອງເຮົາ (ເບິ່ງ ລູກາ 14:26-33). ຄວາມບໍ່ຍຸດຕິທັມມີຢູ່ອ້ອມຮອບເຮົາ. ພວກເຮົາ, ເໝືອນກັນກັບເອສະເທີ, ກໍຈະມາ ຈົບລົງບ່ອນທີ່ພວກເຮົາຢູ່ "ໃນຊ່ວງເວລາອັຕຄັດແບບນີ້."

***ມີຄວາມຢ້ານກົວຫຍັງແດ່ທີ່ຖ່ວງດຶງບໍ່ໃຫ້ເຮົາກະທຳໃນສິ່ງທີ່ຖືກຕ້ອງ ?***

**3. <u>ເອສະເທີ 4:15-16</u>** :

*[15]ແລ້ວເອສະເທີບອກເຂົາໃຫ້ໄປບອກມໍເດກາຍວ່າ [16]"ໄປສາ ໃຫ້ຮວບຮວມພວກຢິວທັງໝົດທີ່ຊອກພົບ ໃນນະຄອນຊູຊາ ແລະຖືສິນອົດອາຫານເພື່ອຂ້ອຍ ຢ່າຊູ່ກິນ ຢ່າຊູ່ດື່ມໃນລະຫວ່າງສາມມື້ທັງກາງຄືນ ຫລືກາງເວັນ ຂ້ອຍ ແລະສາວໃຊ້ຂອງຂ້ອຍຈະອົດອາຫານເໝືອນກັບພວກທ່ານດ້ວຍ ແລ້ວຂ້ອຍຈະເຂົ້າເຝົ້າກະສັດເຖິງວ່າເປັນການຝ່າຝືນກົດໝາຍກໍຕາມ ຖ້າຂ້ອຍຕາຍຍ້ອນກະທຳເຊັ່ນນັ້ນຂ້ອຍກໍຍອມ."*

ເວລາຄຳອຸທອນຂອງມໍເດກາຍໄປຮອດເອສະເທີ, ພຣະນາງກໍອາດງຽບຢູ່ດ້ວຍຄວາມເຫັນແກ່ຕົວແລະຍຶດໝັ້ນຢູ່ກັບຕຳ ແໜ່ງຂອງພຣະນາງ, ໂດຍອ້າງເຫດຜົນວ່າພຣະນາງອາດສາມາດ ຫຼີກລ້ຽງການຕາຍດ້ວຍຕົນເອງໄດ້. ແຕ່ເຖິງ

ແມ່ນວ່າພຣະນາງຈະອາສັຍຢູ່ໃນວັງ ແລະອະພິເສກກັບກະສັດກໍຕາມ, ເອສະເທີກໍຍັງຢູ່ທີ່ຫົວໃຈຂອງບັນທາຄືເປັນລູກສາວຂອງຄົນອິສຣາ ເອນ.

ກ່ອນທີ່ພຣະນາງຈະລົງມື, ເອສະເທີຮຽກຮ້ອງໃຫ້ມີການອົດອາຫານຫຼາຍຄົນເທົ່າທີ່ນໍເດກາຍສາມາດເຕົ້າໂຮມໄດ້ ແລະໃຫ້ບອກໄວໆ ໂດຍປົກຕິຄົນຈະອົດອາຫານນຶ່ງວັນແລະພຽງແຕ່ກາງເວັນເທົ່ານັ້ນແຕ່ເອສະເທີຮ້ອງຂໍໃຫ້ນານພິເສດ, ຕໍ່ເນື່ອງ,ອົດສາມວັນ. ເຖິງແມ່ນຂໍ້ພຣະຄັມພີບໍ່ໄດ້ກ່າວວ່າປະຊາຊົນໄດ້ອະທິຖານ, ຈຸດປະສົງຂອງການຖືສິນອົດອາຫານກໍແມ່ນເພື່ອສແວງຫາພຣະເຈົ້າໃນການອະທິຖານດ້ວຍໃຈຈິດຈໍ່. ເອສະເທີ ບໍ່ລົງມືທໍາສິ່ງໃດແລະບໍ່ໄປຢືນຢູ່ຕໍ່ໜ້າກະສັດຈົນກວ່າປະຊາປະຊາຊົນຈະຢືນຢູ່ຕໍ່ໜ້າພຣະເຈົ້າ.

ແລ້ວ ເອສະເທີກໍມອບທຸກສິ່ງໄວ້ໃນພຣະຫັດຂອງພຣະເຈົ້າ: "ຖ້າຂ້ອຍຕາຍ, ຂ້ອຍກໍຍອມ." ພຣະນາງບໍ່ໄດ້ຢູ່ໃຕ້ການ ເພີ້ຝັນໃດໆ ຊຶ່ງພຣະເຈົ້າຈະອະນຸຍາດໃຫ້ພຣະນາງເຂົ້າເຝົ້າກະສັດໂດຍບໍ່ມີພັຍອັນຕະລາຍໃດໆ. ພຣະນາງບໍ່ເຂົ້າສ່ວນກັບ ຄວາມຄິດການຫຼອກໃຊ້ພຣະຫັດຂອງພຣະເຈົ້າ ດ້ວຍຄວາມເຊື່ອອັນແຮງກ້າຂອງພວກເຮົາ. ດັ່ງດຽວກັນກັບບຸຣຸດຜູ້ໃຈກ້າສາມຄົນທີ່ຖືກເນບູກາເນັດຊາໂຍນລົງໃນເຕົາໄຟ (ເບິ່ງດານີເອັນ 3:17-18), ເອສະເທີ ວາງໃຈໃນຄວາມສາມາດປົດປ່ອຍຂອງພຣະເຈົ້າ, ແຕ່ໃນທີ່ສຸດວາງໃຈໃນຄວາມຍິ່ງໃຫຍ່ສູງສຸດຂອງພຣະອົງ. ທຸກວັນນີ້ຄຣິສຕຽນຢູ່ທົ່ວໂລກຖືກຂັງຄຸກ, ທໍຣະມານ, ແມ່ນກະທັ້ງເສັຽຊີວິດຍ້ອນເປັນຜູ້ຕິດຕາມພຣະຄຣິດ. ມີໜ້ອຍຄົນໃນພວກເຮົາອາດປະເຊີນກັບການເລືອກທີ່ຈະປະຕິ ເສດພຣະຄຣິດ ຫຼືການຕາຍ, ແຕ່ພວກເຮົາຖືກເອີ້ນໃຫ້ຕັດສິດຂອງຕົນ, ຕາຍຕໍ່ຕົນເອງ, ແລະຕາມພຣະເຢຊູໄປ. ພວກເຮົາບໍ່ໄດ້ຢູ່ເພື່ອຕົນເອງ; ພວກເຮົາຢູ່ເພື່ອພຣະຄຣິດ ແລະ ພວກເຮົາຄວນລຸກຂຶ້ນເພື່ອພວກທີ່ບໍ່ອອກສຽງ. ໃຫ້ເຮົານໍາເອົາຂ່າວປະເສີດເຣື່ອງຣາຊອານາຈັກຂອງພຣະເຈົ້າອອກໄປສູ່ໂລກດ້ວຍການປະກາດຂ່າວປະເສີດ ແລະດ້ວຍການເປັນພະຍານໃນການ ສະແດງອອກເຖິງຄວາມເມດຕາຂອງພວກເຮົາ.

| |
|---|
| *ພວກເຮົາຮຽນຮູ້ຫຍັງຈາກເອສະເທີກ່ຽວກັບການຕິດຕາມພຣະຄຣິດ?* |

## ນໍາໃຊ້ໃນຊີວິດ

ໃນເມື່ອທ່ານຍອມຈໍານົນຕໍ່ພຣະເຈົ້າ, ຈົ່ງພິຈາຣະນາວ່າພຣະອົງຊົງນໍາທ່ານເຮັດຫຍັງ "ໃນເວລາເຊັ່ນດຽວກັນນີ້?" ຈົ່ງເລືອກການນໍາໃຊ້ອັນໃດອັນນຶ່ງຕໍ່ລົງໄປນີ້:

- **ອ່ານ.** ຈົ່ງຮຽນຮູ້ຄວາມຕ້ອງການຂອງກຸ່ມຄົນທີ່ອ່ອນແອໃນຊຸມຊົນຂອງທ່ານ ຫຼືພູມິພາກໃດນຶ່ງຂອງໂລກ. ເຂົ້າເບິ່ງ Website ເຊັ່ນ imb.org, compassion.com, and ijm.org ຈະສາມາດໃຫ້ທ່ານເຫັນ ສະພາບຂອງຄົນອື່ນໆ. ຈົ່ງໃຫ້ນໍ້າໜັກຂອງຄວາມບໍ່ເປັນທັມຊຶມຊວ່ານເຂົ້າໃນທ່ານ ແລະຜັກດັນທ່ານ.
- **ອະທິຖານ.** ໄຫວ້ວອນຂໍອົງພຣະຜູ້ເປັນເຈົ້າບໍ່ພຽງແຕ່ເປີດຕາທ່ານສູ່ຄວາມບໍ່ເປັນທັມໃດນຶ່ງໂດຍສະເພາະເທົ່ານັ້ນແຕ່ຂໍໃຫ້ຍ້າຍຫົວໃຈຂອງທ່ານອະທິຖານແທນຜູ້ທີ່ອ່ອນແຮງ. ອະທິຖານເປັນປະຈໍາ. ແລະອະທິຖານດ້ວຍໃຈຮ້ອນຮົນ.
- **ກະທໍາ.** ຈົ່ງພິຈາຣະນາທາງທີ່ທ່ານ ແລະກຸ່ມຂອງທ່ານສາມາດກ່າວແທນຜູ້ອ່ອນແອ. ທ່ານສາມາດຮ່ວມກັບອົງການຕ່າງໆຕອບສນອງຄວາມຕ້ອງການ, ໃຊ້ທັງເວລາ ແລະຊັບສິນເພື່ອເຂົ້າຮ່ວມ.

ມີວິຣະຊົນຫຼາຍປະເພດໃນໂລກນີ້, ແຕ່ບໍ່ມີຜູ້ໃດ ເຮັດໃຫ້ມີຄວາມໝາຍອັນເປັນຜົນຕໍ່ຊີວິດນິຣັນ ດັ່ງຜູ້ທີ່ມີສ່ວນເຂົ້າຮ່ວມກັບພຣະເຈົ້າ. ກ່ອນການກະທໍາໃດໆ ຈົ່ງແນ່ໃຈວ່າທ່ານໄດ້ຄຸເຂົ່າລົງ ແລະອະທິຖານກ່ອນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**